**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ...2378......../ອຄ
ນະຄອນຫຼວງວຽງຈັນ, ວັນທີ..21...ກໍລະກົດ.2026

# ຂໍ້ຕົກລົງ
# ວ່າດ້ວຍເຄື່ອງຈັກອຸດສາຫະກຳ

- ອີງຕາມ ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມອຸດສາຫະກຳປຸງແຕ່ງ ສະບັບເລກທີ 2207/ກອປ.ຕອ, ລົງວັນທີ 03 ມິຖຸນາ 2026.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງເຄື່ອງຈັກອຸດສາຫະກຳ ເພື່ອເຮັດໃຫ້ວຽກງານດັ່ງກາວ ຖືກຕ້ອງສອດຄ່ອງຕາມກົດໝາຍ, ລະບຽບການ ແລະ ມາດຕະຖານເຕັກນິກໂຮງງານ ແນໃສ່ຊຸກຍູ້, ສົ່ງເສີມ ການນຳໃຊ້ເຄື່ອງຈັກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ, ປະຢັດພະລັງງານ, ມີມົນລະພິດຕ່ຳ, ນຳໃຊ້ຖືກກັບເປົ້າໝາຍ ຮັບປະກັນໃຫ້ຜະລິດຕະພັນມີຄຸນນະພາບ ແລະ ໄດ້ມາດຕະຖານ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດທັນເປັນອຸດສາຫະກຳທັນສະໄໝ, ສີຂຽວ ແລະ ຍືນຍົງ

**ມາດຕາ 2 ເຄື່ອງຈັກອຸດສາຫະກຳ**

ເຄື່ອງຈັກອຸດສາຫະກຳ ແມ່ນເຄື່ອງຈັກທີ່ນຳໃຊ້ໃນໂຮງງານ ເພື່ອຜະລິດ, ປຸງແຕ່ງ, ແປຮູບວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບ ຈາກສະພາບເດີມໄປສູ່ຜະລິດຕະພັນໃໝ່ ເປັນສິນຄ້າ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຄື່ອງຈັກ** ໝາຍເຖິງ ເຄື່ອງຊ່ວຍແຮງທີ່ປະກອບດ້ວຍຫຼາຍຊິ້ນສ່ວນ ເພື່ອໃຊ້ຜະລິດ, ນຳສົ່ງພະລັງງານ, ປ່ຽນ ຫຼື ສັບປ່ຽນທີ່ຂອງພະລັງງານໃດໜຶ່ງ ເປັນພະລັງງານອື່ນ ດ້ວຍການໃຊ້ພະລັງງານນ້ຳ, ອາຍນ້ຳ, ນ້ຳມັນເຊື້ອໄຟ, ອາກາດ, ອາຍແກັສ, ໄຟຟ້າ, ພະລັງງານລົມ ຫຼື ພະລັງງານຊະນິດອື່ນ ຢ່າງໃດຢ່າງໜຶ່ງ ຫຼື ຫຼາຍຢ່າງລວມກັນ;

2. **ກຳລັງແຮງລວມຂອງເຄື່ອງຈັກອຸດສາຫະກຳ** ໝາຍເຖິງ ກຳລັງແຮງຂອງເຄື່ອງຈັກ ຫຼື ກຳລັງແຮງທຽບເທົ່າທັງໝົດ ທີ່ຕິດຕັ້ງຢູ່ໃນໂຮງງານ ຊຶ່ງມີຫົວໜ່ວຍຄິດໄລ່ເປັນແຮງມ້າ;

3. **ປະສິດທິພາບຂອງເຄື່ອງຈັກອຸດສາຫະກຳ** ໝາຍເຖິງ ຄ່າທີ່ບົ່ງບອກຄວາມສາມາດຂອງເຄື່ອງຈັກອຸດສາຫະກຳ ໃນການປ່ຽນພະລັງງານປ້ອນເຂົ້າ ໃຫ້ກາຍເປັນພະລັງງານທີ່ເປັນປະໂຫຍດ ໂດຍຫຼຸດຫຼຸ່ງການສູນເສຍພະລັງງານ ເປັນຕົ້ນ ຄວາມຮ້ອນ, ສຽງ ຫຼື ການສັ່ນສະເທືອນ ແລະ ຫຼຸດຜ່ອນການສ້າງມົນລະພິດ;

4. **ຄ່າຫຼຸ້ຍຫ້ຽນເຄື່ອງຈັກອຸດສາຫະກຳ** ໝາຍເຖິງ ຄ່າສູນເສຍປະສິດທິພາບ ຫຼື ຄຸນນະພາບ ຂອງເຄື່ອງຈັກ ຫຼື ອຸປະກອນທີ່ໃຊ້ໃນການຜະລິດ ຕາມໄລຍະເວລາ ອັນເນື່ອງມາຈາກການໃຊ້ງານ;

5. **ຈຳນອງ** ໝາຍເຖິງ ການນຳເອົາເຄື່ອງໄປຈຳເອົາເງິນມີການຮັບປະກັນການໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະອື່ນແກ່ເຈົ້າໜີ້ ດ້ວຍການຈົດທະບຽນຊັບທີ່ນຳມາຈຳນອງ ໂດຍບໍ່ໄດ້ມອບຊັບສິ່ງຂອງດັ່ງກ່າວ ໃຫ້ຢູ່ໃນການຄອບຄອງຂອງຜູ້ຮັບຈຳນອງ;

6. **ລະຫັດກິດຈະການ** ໝາຍເຖິງ ເລກລະຫັດໝູ່ຂອງກິດຈະການ ຕາມລະຫັດສາລະບານການຈັດແບ່ງຂະແໜງເສດຖະກິດ ຂອງ ສປປ ລາວ;

7. **ແບບພິມ ຄຈ** ໝາຍເຖິງ ເອກະສານກຳນົດຮູບແບບການປະກອບຂໍ້ມູນ ເພື່ອສະເໜີຂໍຈົດທະບຽນເຄື່ອງຈັກອຸດສາຫະກຳ, ຍົກຍ້າຍເຄື່ອງຈັກອຸດສາຫະກຳ ແລະ ນຳເຂົ້າເຄື່ອງຈັກອຸດສາຫະກຳ ມາຮັບໃຊ້ການຜະລິດແບບຊົ່ວຄາວມີກຳນົດ ປະກອບດ້ວຍ ແບບພິມ ຄຈ 01 ໃບຄຳຮ້ອງຂໍຈົດທະບຽນເຄື່ອງຈັກອຸດສາຫະກຳ, ຄຈ 02 ຕາຕະລາງລາຍການເຄື່ອງຈັກອຸດສາຫະກຳ, ຄຈ 03 ໃບສະເໜີຂໍຍົກຍ້າຍເຄື່ອງຈັກອຸດສາຫະກຳ, ຄຈ 04 ໜັງສືແຈ້ງການນຳເຂົ້າເຄື່ອງຈັກມາຮັບໃຊ້ການຜະລິດແບບຊົ່ວຄາວ ແລະ ຄຈ 05 ຄຳຮ້ອງຂໍຂັດຄ້ານການຈົດທະບຽນເຄື່ອງຈັກ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການໂຮງງານອຸດສາຫະກຳ ທຸກປະເພດ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ຢູ່ ສປປ ລາວ.

## ໝວດທີ 2
## ການນຳເຂົ້າເຄື່ອງຈັກອຸດສາຫະກຳ

**ມາດຕາ 5 ຮູບແບບ ແລະ ການນຳເຂົ້າເຄື່ອງຈັກອຸດສາຫະກຳ**

ການນຳເຂົ້າເຄື່ອງຈັກອຸດສາຫະກຳ ມີ 2 ຮູບແບບ ຄື:

1. ການນຳເຂົ້າເຄື່ອງຈັກອຸດສາຫະກຳ ແບບຊົ່ວຄາວ;
2. ການນຳເຂົ້າເຄື່ອງຈັກອຸດສາຫະກຳ ແບບຖາວອນ.

**ມາດຕາ 6 ການນຳເຂົ້າເຄື່ອງຈັກອຸດສາຫະກຳ ແບບຊົ່ວຄາວ**

ການນຳເຂົ້າເຄື່ອງຈັກອຸດສາຫະກຳ ແບບຊົ່ວຄາວ ແມ່ນການນຳເຂົ້າມາ ເພື່ອຮັບໃຊ້ການຜະລິດຢູ່ໃນໂຮງງານ ຊຶ່ງມີໄລຍະເວລາການນຳໃຊ້ ພາຍໃນ ຮ້ອຍແປດສິບວັນ ພາຍຫຼັງໝົດໄລຍະເວລາການນຳໃຊ້ຕ້ອງໄດ້ສົ່ງກັບຄືນປະເທດ ແລະ ບໍ່ໄດ້ຂຶ້ນທະບຽນເຄື່ອງຈັກ.

ກ່ອນ ຫຼື ຫຼັງ ນຳເຂົ້າ ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳ ທີ່ມີຈຸດປະສົງນຳເຂົ້າເຄື່ອງຈັກອຸດສາຫະກຳ ແບບຊົ່ວຄາວ ຕ້ອງປະຕິບັດ ດັ່ງນີ້:

1. ກຳນົດຈະແຈ້ງສະຖານທີ່ຕິດຕັ້ງ ແລະ ແຜນກຳນົດເວລາການນຳໃຊ້;
2. ພາຍຫຼັງໝົດໄລຍະເວລາການນຳເຂົ້າ ຕ້ອງລາຍງານໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ຕາມແບບພິມ ຄຈ 04 ຂອງກົມອຸດສາຫະກຳປຸງແຕ່ງ;

3. ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳ ທີ່ນຳເຂົ້າເຄື່ອງຈັກອຸດສາຫະກຳ ແບບຊົ່ວຄາວ ພາຍຫຼັງໝົດໄລຍະເວລາການນຳໃຊ້ສາມາດສະເໜີຕໍ່ເວລາ ຮ້ອຍແປດສິບວັນ ຕໍ່ຄັ້ງ ແຕ່ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາ.

ກໍລະນີ ການນຳເຂົ້າເຄື່ອງຈັກອຸດສາຫະກຳ ແບບຊົ່ວຄາວ ພາຍຫຼັງໝົດໄລຍະເວລານຳໃຊ້, ຖ້າຫາກຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳ ຕ້ອງການປ່ຽນເປັນການນຳເຂົ້າ ແບບຖາວອນ ໃຫ້ປະຕິບັດຕາມທີ່ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 7 ການນຳເຂົ້າເຄື່ອງຈັກອຸດສາຫະກຳ ແບບຖາວອນ**

ການນຳເຂົ້າເຄື່ອງຈັກອຸດສາຫະກຳ ແບບຖາວອນ ແມ່ນການນຳເຂົ້າມາຕິດຕັ້ງ ແລະ ນຳໃຊ້ຢູ່ໃນໂຮງງານອຸດສາຫະກຳ ໂດຍບໍ່ມີກຳນົດເວລາສົ່ງອອກຄືນ ຊຶ່ງສາມາດຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ຕາມທີ່ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 8 ເງື່ອນໄຂການນຳເຂົ້າເຄື່ອງຈັກອຸດສາຫະກຳ**

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳ ທີ່ມີຈຸດປະສົງນຳເຂົ້າເຄື່ອງຈັກອຸດສາຫະກຳ ເພື່ອມານຳໃຊ້ຢູ່ໃນໂຮງງານອຸດສາຫະກຳ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເຄື່ອງຈັກອຸດສາຫະກຳທີ່ນຳເຂົ້າ ຕ້ອງສອດຄ່ອງຕາມເປົ້າໝາຍການຜະລິດ ຂອງໂຮງງານອຸດສາຫະກຳຕາມທີ່ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກໂຮງງານ ຫຼື ໃບຢັ້ງຢືນດຳເນີນກິດຈະການໂຮງງານ ສຳລັບໂຮງງານທີ່ໄດ້ຮັບອະນຸຍາດດຳເນີນກິດຈະການໂຮງງານ;

2. ເຄື່ອງຈັກອຸດສາຫະກຳທີ່ນຳເຂົ້າ ຕ້ອງເປັນເຄື່ອງຈັກອຸດສາຫະກຳໃໝ່ ຫຼື ເຄື່ອງຈັກອຸດສາຫະກຳທີ່ໃຊ້ແລ້ວ ຕ້ອງມີຄຸນນະພາບ, ສະມັດຕະພາບດີ, ມີຄູ່ມືແນະນຳການນຳໃຊ້ ແລະ ເລກລະຫັດເຄື່ອງຈັກອຸດສາຫະກຳ;

3. ເຄື່ອງຈັກອຸດສາຫະກຳ ທີ່ໄດ້ບັນຈຸເຂົ້າໃນແຜນການເຄື່ອນໄຫວປະຈຳປີ ຂອງໂຮງງານອຸດສາຫະກຳໂດຍຜ່ານການຮັບຮອງ ຈາກຂະແໜງອຸດສາຫະກຳ ແລະ ການຄ້າ.

## ໝວດທີ 3
## ການຕິດຕັ້ງ, ນຳໃຊ້ ແລະ ການຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ

**ມາດຕາ 9 ການຕິດຕັ້ງ ແລະ ນຳໃຊ້ເຄື່ອງຈັກອຸດສາຫະກຳ**

ການຕິດຕັ້ງ ແລະ ການນຳໃຊ້ເຄື່ອງຈັກອຸດສາຫະກຳ ຕ້ອງຕິດຕັ້ງຕາມແຜນຜັງການຕິດຕັ້ງເຄື່ອງຈັກອຸດສາຫະກຳ ທີ່ໄດ້ອອກແບບຕາມລະບົບການຜະລິດຂອງໂຮງງານ, ຖືກຕ້ອງຕາມມາດຕະຖານເຕັກນິກເຄື່ອງຈັກອຸດສາຫະກຳ ແລະ ສອດຄ່ອງກັບແຜນຜັງທີ່ໄດ້ອອກແບບຕາມບົດວິພາກເສດຖະກິດ-ເຕັກນິກໂຮງງານ.

ການນຳໃຊ້ເຄື່ອງຈັກອຸດສາຫະກຳ ຕ້ອງນຳໃຊ້ໃຫ້ສອດຄ່ອງຕາມເປົ້າໝາຍການຜະລິດ ຂອງໂຮງງານອຸດສາຫະກຳ ທີ່ໄດ້ຮັບອະນຸຍາດ.

ຂະແໜງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຕິດຕາມ, ກວດກາ ການຕິດຕັ້ງເຄື່ອງຈັກ, ຈຳນວນເຄື່ອງຈັກ, ແຮງມ້າເຄື່ອງຈັກ ແລະ ຮັບຮອງຄວາມຖືກຕ້ອງການນຳໃຊ້ເຄື່ອງຈັກອຸດສາຫະກຳ ຢູ່ໂຮງງານອຸດສາຫະກຳ ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 10 ການຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ**

ການຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ແມ່ນຂຶ້ນກັບຄວາມສະມັກໃຈຂອງເຈົ້າຂອງກຳມະສິດເຄື່ອງຈັກ ໂດຍການເກັບກຳ ແລະ ບັນທຶກຂໍ້ມູນກ່ຽວຂ້ອງກັບເຄື່ອງຈັກອຸດສາຫະກຳ ເປັນຕົ້ນ ຈຳນວນເຄື່ອງຈັກອຸດສາຫະກຳ, ກຳລັງແຮງມ້າຂອງແຕ່ລະເຄື່ອງຈັກອຸດສາຫະກຳ, ອາຍຸການນຳໃຊ້, ສັນຍາຊື້ຂາຍ, ເອກະສານການນຳເຂົ້າ, ໃບຮັບຮອງມາດຕະຖານຈາກໂຮງງານຜະລິດເຄື່ອງຈັກ, ໝາຍເລກເຄື່ອງຈັກອຸດສາຫະກຳ, ປີຜະລິດ, ວິທີການນຳໃຊ້, ໜ້າທີ່ຂອງເຄື່ອງຈັກ, ຍີ່ຫໍ້ ແລະ ຄວາມປອດໄພ ເພື່ອຈຸດປະສົງຈະເອົາໄປນຳໃຊ້ເປັນຫຼັກຊັບຄ້ຳປະກັນ ຫຼື ຢັ້ງຢືນການເປັນເຈົ້າຂອງກຳມະສິດຂອງເຄື່ອງຈັກດັ່ງກ່າວ ໃນເປົ້າໝາຍໃດໜຶ່ງ.

**ມາດຕາ 11 ການສະເໜີຂໍຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ**

ຜູ້ດຳເນີນກິດຈະການ ໂຮງງານອຸດສາຫະກຳ ທີ່ມີຈຸດປະສົງ ສະເໜີຂໍຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເຄື່ອງຈັກອຸດສາຫະກຳ ທີ່ນຳເຂົ້າແບບຖາວອນ;
2. ສຳເລັດການຕິດຕັ້ງເຄື່ອງຈັກອຸດສາຫະກຳໃນໂຮງງານ ຫຼື ຫຼັງຈາກໄດ້ຮັບອະນຸຍາດດຳເນີນກິດຈະການໂຮງງານ;
3. ຕ້ອງເປັນເຈົ້າຂອງກຳມະສິດເຄື່ອງຈັກອຸດສາຫະກຳ.

ສຳລັບບຸກຄົນ ຫາກມີຈຸດປະສົງ ສະເໜີຂໍຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ຕ້ອງສຳເລັດການຕິດຕັ້ງເຄື່ອງຈັກອຸດສາຫະກຳ ແລະ ມີເອກະສານຢັ້ງຢືນການເປັນເຈົ້າຂອງກຳມະສິດເຄື່ອງຈັກອຸດສາຫະກຳ ກໍ່ສາມາດຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ.

**ມາດຕາ 12 ການສະເໜີຂໍຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ**

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງ ສະເໜີຂໍຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ໃຫ້ຍື່ນຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ ຄຈ 01 ຂອງກົມອຸດສາຫະກຳປຸງແຕ່ງ;
2. ບັນຊີລາຍການເຄື່ອງຈັກອຸດສາຫະກຳ ຕາມແບບພິມ ຄຈ 02 ຂອງກົມອຸດສາຫະກຳປຸງແຕ່ງ;
3. ແຜນຜັງຕິດຕັ້ງເຄື່ອງຈັກອຸດສາຫະກຳ;
4. ໃບຢັ້ງຢືນກຳມະສິດເຄື່ອງຈັກອຸດສາຫະກຳ;
5. ສຳເນົາໃບຢັ້ງຢືນດຳເນີນກິດຈະການໂຮງງານ ສຳລັບໂຮງງານທີ່ໄດ້ຮັບອະນຸຍາດດຳເນີນກິດຈະການໂຮງງານ;
6. ໃບມອບສິດ ກໍລະນີ ເຈົ້າຂອງກຳມະສິດ ບໍ່ສາມາດມາພົວພັນໄດ້ດ້ວຍຕົວເອງ;
7. ໃນກໍລະນີໂຮງງານເຊົ່າເຄື່ອງຈັກອຸດສາຫະກຳຈາກບໍລິສັດ ຫຼື ໂຮງງານອື່ນ ຕ້ອງມີສັນຍາເຊົ່າ.

**ມາດຕາ 13 ການພິຈາລະນາຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ**

ການພິຈາລະນາຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກຳນົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້, ຂະແໜງອຸດສາຫະກຳ ແລະ ການຄ້າ ໃຫ້ປະຕິບັດ ດັ່ງນີ້:

1. ລົງກວດກາເຄື່ອງຈັກອຸດສາຫະກຳຢູ່ໂຮງງານ ເພື່ອເກັບກຳຂໍ້ມູນເຄື່ອງຈັກອຸດສາຫະກຳ ໃຫ້ສຳເລັດພາຍໃນ ສິບຫ້າວັນ ນັບແຕ່ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ;

2. ປະກາດຫາຜູ້ຂັດຄ້ານໃນການຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ໂດຍຜ່ານທາງສື່ອອນລາຍ, ໜັງສືພິມ ຫຼື ທາງໂທລະພາບ ຫຼື ຊ່ອງທາງອື່ນ ໃຫ້ສຳເລັດພາຍໃນ ສິບຫ້າວັນ ພາຍຫຼັງລົງກວດກາເຄື່ອງຈັກອຸດສາຫະກຳຢູ່ໂຮງງານ;

3. ກໍລະນີ ບໍ່ມີຜູ້ຂັດຄ້ານການຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ, ໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ລົງຕິດປ້າຍທະບຽນເຄື່ອງຈັກອຸດສາຫະກຳ. ພາຍຫຼັງສຳເລັດການຕິດປ້າຍທະບຽນເຄື່ອງຈັກອຸດສາຫະກຳແລ້ວ ໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ພິຈາລະນາອອກໃບຢັ້ງຢືນການຂຶ້ນທະບຽນເຄື່ອງຈັກພາຍໃນ ສິບວັນລັດຖະການ.

ກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຂະແໜງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງໃຫ້ຜູ້ຍື່ນຄຳຮ້ອງຊາບ ພາຍໃນ ສາມວັນ ນັບແຕ່ວັນຮັບເອກະສານເປັນຕົ້ນໄປ ເພື່ອປັບປຸງແກ້ໄຂ.

ກໍລະນີບໍ່ສາມາດຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ສາເຫດຍ້ອນມີຜູ້ຂັດຄ້ານ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ຍື່ນຄຳຮ້ອງຊາບພາຍໃນ ຫ້າວັນ ນັບແຕ່ວັນທີ່ມີຜູ້ຂັດຄ້ານ.

### ມາດຕາ 14 ການຂັດຄ້ານການຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີຈຸດປະສົງຂັດຄ້ານການຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ໃຫ້ຍື່ນຄຳຮ້ອງ ຕາມແບບພິມ ຄຈ 05 ຂອງກົມອຸດສາຫະກຳປຸງແຕ່ງ ຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ພາຍໃນ ສິບຫ້າວັນ ນັບແຕ່ມື້ປະກາດຫາຜູ້ຂັດຄ້ານ. ພາຍຫຼັງໄດ້ຮັບຄຳຮ້ອງຂໍຂັດຄ້ານແລ້ວ ຂະແໜງອຸດສາຫະກຳ ແລະ ການຄ້າ ຈະໂຈະການພິຈາລະນາຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ຈົນກວ່າຈະກວດກາ ແລະ ຮັບຮູ້ຜົນການເປັນເຈົ້າຂອງກຳມະສິດທີ່ແທ້ຈິງ ຖ້າວ່າຜູ້ຂັດຄ້ານ ຫາກມີເຫດຜົນບໍ່ພຽງພໍ ໃນການສະແດງຄວາມເປັນເຈົ້າຂອງກຳມະສິດແລ້ວ ຈຶ່ງຈະສາມາດດຳເນີນການຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ.

### ມາດຕາ 15 ໃບຢັ້ງຢືນການຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ

ໃບຢັ້ງຢືນການຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ແມ່ນເອກະສານການຢັ້ງຢືນຮັບຮູ້ຄວາມເປັນເຈົ້າຂອງກຳມະສິດເຄື່ອງຈັກອຸດສາຫະກຳ ພາຍຫຼັງສຳເລັດການຕິດປ້າຍທະບຽນເຄື່ອງຈັກອຸດສາຫະກຳ ຊຶ່ງຂະແໜງອຸດສາຫະກຳ ແລະ ການຄ້າ ອອກໃຫ້ຜູ້ດຳເນີນກິດຈະການໂຮງງານ ຫຼື ບຸກຄົນ ເພື່ອຮັບຮູ້ສິດໃນການເປັນເຈົ້າຂອງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ໂຮງງານ;
2. ຊື່ຜູ້ອຳນວຍການໂຮງງານ ຫຼື ເຈົ້າຂອງກຳມະສິດເຄື່ອງຈັກອຸດສາຫະກຳ;
3. ສະຖານທີ່ຕັ້ງໂຮງງານ;
4. ຈຳນວນລວມເຄື່ອງຈັກອຸດສາຫະກຳ;
5. ຈຳນວນແຮງມ້າລວມ.

ໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ມີອາຍຸການນຳໃຊ້ 5 ປີ ແລະ ສາມາດຕໍ່ໄດ້.

### ມາດຕາ 16 ປ້າຍທະບຽນເຄື່ອງຈັກອຸດສາຫະກຳ

ປ້າຍທະບຽນເຄື່ອງຈັກອຸດສາຫະກຳ ແມ່ນຮູບແບບການບັນທຶກຂໍ້ມູນ ເພື່ອຕິດໃສ່ເຄື່ອງຈັກອຸດສາຫະກຳ, ປ້າຍທະບຽນເຄື່ອງຈັກອຸດສາຫະກຳ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ອົງການຈັດຕັ້ງທີ່ຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ;
2. ອັກສອນຫຍໍ້ເຄື່ອງຈັກອຸດສາຫະກຳ;
3. ປີທີ່ຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ;
4. ລະຫັດແຂວງ, ເມືອງ ທີ່ໂຮງງານຕັ້ງຢູ່;
5. ລະຫັດກິດຈະການໂຮງງານ;
6. ລຳດັບໂຮງງານທີ່ຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ;
7. ລຳດັບເຄື່ອງຈັກອຸດສາຫະກຳ ທີ່ສະແດງໃນແຜນຜັງຕິດຕັ້ງເຄື່ອງຈັກ;
8. ຂະໜາດຂອງແຜ່ນປ້າຍທະບຽນ : 6 x 15 ຊມ, ພື້ນສີຟ້າ, ໂຕໜັງສືສີດຳ ແລະ ເຮັດດ້ວຍແຜນໂລຫະ.

ສຳລັບການຕິດແຜ່ນປ້າຍທະບຽນໃສ່ເຄື່ອງຈັກອຸດສາຫະກຳ ຕ້ອງຕິດໃຫ້ສຳເລັດ ກ່ອນການອອກໃບຢັ້ງຢືນການຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ.

**ມາດຕາ 17 ການປ່ຽນແປງເນື້ອໃນໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ**

ການປ່ຽນແປງເນື້ອໃນໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ແມ່ນການປ່ຽນແປງຊື່ເຈົ້າຂອງກຳມະສິດ, ຊື່ໂຮງງານບ່ອນຕິດຕັ້ງເຄື່ອງຈັກ, ຍົກຍ້າຍທີ່ຕັ້ງເຄື່ອງຈັກ, ລາຍການເຄື່ອງຈັກ, ຈຳນອນເຄື່ອງຈັກ ແລະ ການປ່ຽນແປງອື່ນ ໃຫ້ປະຕິບັດຕາມຂັ້ນຕອນການພິຈາລະນາຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

ຜູ້ເປັນເຈົ້າຂອງກຳມະສິດເຄື່ອງຈັກອຸດສາຫະກຳ ທີ່ຕ້ອງການປ່ຽນແປງເນື້ອໃນໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ຕ້ອງແຈ້ງຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ບ່ອນທີ່ຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ.ພາຍຫຼັງທີ່ໄດ້ຮັບການແຈ້ງຈາກເຈົ້າຂອງເຄື່ອງຈັກອຸດສາຫະກຳ ຂະແໜງອຸດສາຫະກຳ ແລະ ການຄ້າ ຕ້ອງດຳເນີນການຕາມຂັ້ນຕອນທີ່ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

ກໍລະນີ ເຄື່ອງຈັກທີ່ໄດ້ຂຶ້ນທະບຽນແລ້ວ ໝົດອາຍຸການນຳໃຊ້, ເປ່ເພ, ເສຍຫາຍ, ຖືກທຳລາຍ ແລະ ໃຊ້ງານບໍ່ໄດ້ ເຈົ້າຂອງກຳມະສິດເຄື່ອງຈັກອຸດສາຫະກຳ ຕ້ອງແຈ້ງຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ບ່ອນທີ່ຮັບຂຶ້ນທະບຽນຊາບ ພາຍໃນ ສາມສິບວັນ ເພື່ອດຳເນີນການປ່ຽນແປງເນື້ອໃນ ຫຼື ຍົກເລີກ ໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ.

**ມາດຕາ 18 ໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ເສຍຫາຍ ຫຼື ຖືກທຳລາຍ**

ໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ເສຍຫາຍ ຫຼື ຖືກທຳລາຍ ຕ້ອງຍື່ນຄຳຮ້ອງຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ບ່ອນທີ່ອອກໃບທະບຽນ ເພື່ອພິຈາລະນາອອກໃບທະບຽນສະບັບໃໝ່ປ່ຽນແທນ, ຊຶ່ງຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ ຄຈ 01 ຂອງກົມອຸດສາຫະກຳປຸງແຕ່ງ;
2. ໃບຢັ້ງຢືນກຳມະສິດເຄື່ອງຈັກອຸດສາຫະກຳ;
3. ສຳເນົາໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ.

ໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳສະບັບໃໝ່ ມີເນື້ອໃນດຽວກັນກັບໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳສະບັບເດີມ.

**ມາດຕາ 19 ການຍົກເລີກ ໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ**

ໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ຈະຖືກຍົກເລີກ ໃນກໍລະນີ ດັ່ງລຸ່ມນີ້:

1. ເຈົ້າຂອງກຳມະສິດເຄື່ອງຈັກອຸດສາຫະກຳ ສະເໜີຍົກເລີກດ້ວຍຄວາມສະໝັກໃຈ;
2. ເຈົ້າຂອງກຳມະສິດເຄື່ອງຈັກອຸດສາຫະກຳ ລະເມີດຂໍ້ຫ້າມ ຕາມທີ່ກຳນົດໄວ້ໃນມາດຕາ 28 ຫຼື ມາດຕາ 30 ຂອງຂໍ້ຕົກລົງສະບັບນີ້;
3. ເຄື່ອງຈັກອຸດສາຫະກຳ ສ້າງຜົນກະທົບຮ້າຍແຮງຕໍ່ຄຸນນະພາບຜະລິດຕະພັນ, ສິ່ງແວດລ້ອມ ແລະ ສັງຄົມ ໂດຍບໍ່ມີການປັບປຸງແກ້ໄຂໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
4. ມີການຂັດຄ້ານ ແລະ ມີຄຳຕັດສິນຂອງສານເຫັນດີຕາມການຂັດຄ້ານ ຫຼື ລົ້ມລະລາຍ.

**ມາດຕາ 20 ການຈຳນອງເຄື່ອງຈັກອຸດສາຫະກຳ**

ເຄື່ອງຈັກອຸດສາຫະກຳ ທີ່ຂຶ້ນທະບຽນແລ້ວ ສາມາດຈຳນອງກັບທະນາຄານ ຫຼື ສະຖາບັນການເງິນ ແຕ່ຕ້ອງປະຕິບັດຕາມເງື່ອນໄຂ ທີ່ທະນາຄານ ຫຼື ສະຖາບັນການເງິນ ກຳນົດ. ພາຍຫຼັງທີ່ໄດ້ນຳໄປຈຳນອງ ເຈົ້າຂອງກຳມະສິດເຄື່ອງຈັກອຸດສາຫະກຳ ຕ້ອງແຈ້ງຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອຊາບ.

ເຄື່ອງຈັກອຸດສາຫະກຳ ທີ່ຂຶ້ນທະບຽນແລ້ວ, ໄດ້ນຳໄປຈຳນອງກັບທະນາຄານ ຫຼື ສະຖາບັນການເງິນ, ກ່ອນຈະສະເໜີຂໍປ່ຽນແປງເນື້ອໃນ ຫຼື ຍົກເລີກ ໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ຕ້ອງໄດ້ຮັບການເຫັນດີຈາກ ທະນາຄານ ຫຼື ສະຖາບັນການເງິນ ບ່ອນທີ່ຮັບຈຳນອງ ເປັນລາຍລັກອັກສອນ ຈຶ່ງສາມາດປ່ຽນແປງເນື້ອໃນ ຫຼື ຍົກເລີກໄດ້.

**ມາດຕາ 21 ການໃຫ້ເຊົ່າ, ເຊົ່າຊື້, ໂອນ, ຊື້ ຫຼື ຂາຍ ເຄື່ອງຈັກອຸດສາຫະກຳ**

ເຈົ້າຂອງກຳມະສິດ ເຄື່ອງຈັກອຸດສາຫະກຳ ສາມາດໃຫ້ເຊົ່າ, ເຊົ່າຊື້, ໂອນ, ຊື້ ຫຼື ຂາຍ ໃຫ້ບຸກຄົນ ຫຼື ນິຕິບຸກຄົນ. ການເຊົ່າຊື້, ໂອນ ຫຼື ຂາຍ ເຄື່ອງຈັກອຸດສາຫະກຳ ຕ້ອງສະເໜີຂໍຂຶ້ນທະບຽນເຄື່ອງຈັກອຸດສາຫະກຳຄືນໃໝ່.

ເຈົ້າຂອງກຳມະສິດ ເຄື່ອງຈັກອຸດສາຫະກຳ ທີ່ໄດ້ນຳໄປຈຳນອງກັບທະນາຄານ ຫຼື ສະຖາບັນການເງິນແລ້ວ ມີຈຸດປະສົງ ໃຫ້ເຊົ່າ, ເຊົ່າຊື້, ໂອນ, ຊື້ ຫຼື ຂາຍ ຕ້ອງໄດ້ຮັບເຫັນດີຈາກທະນາຄານ ຫຼື ສະຖາບັນການເງິນ ບ່ອນທີ່ຮັບຈຳນອງ ເປັນລາຍລັກອັກສອນ ແລະ ຕ້ອງແຈ້ງຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ເສຍກ່ອນ.

**ມາດຕາ 22 ການປະເມີນລາຄາ ແລະ ຄິດໄລ່ຄ່າຫຼຸ້ຍຫ້ຽນເຄື່ອງຈັກອຸດສາຫະກຳ**

ການປະເມີນລາຄາເຄື່ອງຈັກອຸດສາຫະກຳ ແມ່ນການຄິດໄລ່ລາຄາຂອງເຄື່ອງຈັກອຸດສາຫະກຳ ໂດຍອີງໃສ່ອາຍຸການໃຊ້ງານສະພາບເຄື່ອງຈັກ, ການສົມທຽບຄ່າຫຼູຍຫ້ຽນ ແລະ ອີງປະກອບຕ່າງໆ ທີ່ກ່ຽວພັນກັບເຄື່ອງຈັກອຸດສາຫະກຳ ເພື່ອໃຫ້ສາມາດປະເມີນໃຫ້ໃກ້ຄຽງລາຄາຕົວຈິງທີ່ສຸດ.

ການຄິດໄລ່ຄ່າຫຼຸ້ຍຫ້ຽນເຄື່ອງຈັກອຸດສາຫະກຳ ແມ່ນການຊອກຫາມູນຄ່າສູນເສຍປະສິດທິພາບ ຫຼື ຄຸນນະພາບ ຂອງເຄື່ອງຈັກອຸດສາຫະກຳ ຕາມໄລຍະເວລາການໃຊ້ງານ.

ກົມອຸດສາຫະກຳປຸງແຕ່ງ ຕ້ອງສ້າງຄູ່ມືການຄິດໄລ່ລາຄາ ແລະ ປະເມີນຄ່າຫຼຸ້ຍຫ້ຽນເຄື່ອງຈັກອຸດສາຫະກຳ ເພື່ອເປັນເຄື່ອງມືນຳໃຊ້ເຂົ້າໃນການປະເມີນລາຄາ ຫຼື ມູນຄ່າຈິງຂອງເຄື່ອງຈັກອຸດສາຫະກຳ ໃນແຕ່ລະໄລຍະ.

**ມາດຕາ 23 ການບຳລຸງຮັກສາເຄື່ອງຈັກອຸດສາຫະກຳ**

ການບຳລຸງຮັກສາເຄື່ອງຈັກອຸດສາຫະກຳ ແມ່ນການສ້າງແຜນບຳລຸງຮັກສາ, ສ້ອມແປງ, ກວດສອບ ເຄື່ອງຈັກອຸດສາຫະກຳ ປະຈຳປີ ເພື່ອຮັກສາສະພາບການໃຊ້ງານຂອງເຄື່ອງຈັກ ໃຫ້ປົກກະຕິ, ປອດໄພ ແລະ ຍືດອາຍຸການໃຊ້ງານຂອງເຄື່ອງຈັກອຸດສາຫະກຳ ຊຶ່ງໂຮງງານອຸດສາຫະກຳ ຕ້ອງມີໜ່ວຍງານ ແລະ ວິຊາການ ທີ່ສຳນານງານດ້ານເຄື່ອງຈັກອຸດສາຫະກຳ ປະຈຳຢູ່ໂຮງງານ.

**ມາດຕາ 24 ການສະສາງເຄື່ອງຈັກອຸດສາຫະກຳ ທີ່ໃຊ້ງານບໍ່ໄດ້**

ການສະສາງເຄື່ອງຈັກອຸດສາຫະກຳ ທີ່ໃຊ້ງານບໍ່ໄດ້ ແມ່ນ ການລຶບລ້າງເຄື່ອງຈັກອຸດສາຫະກຳ ອອກຈາກລະບົບຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ຊຶ່ງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳ ຕ້ອງຢຸດການນຳໃຊ້ເຄື່ອງຈັກອຸດສາຫະກຳ ນັ້ນຢ່າງຖາວອນ, ການສະສາງເຄື່ອງຈັກອຸດສາຫະກຳ ທີ່ໃຊ້ງານບໍ່ໄດ້ ເປັນຕົ້ນ ເຄື່ອງຈັກອຸດສາຫະກຳ ໝົດອາຍຸການໃຊ້ງານ, ເປ່ເພ, ບໍ່ສາມາດສ້ອມແປງໄດ້ ແລະ ບໍ່ມີຄວາມປອດໄພຕໍ່ການນຳໃຊ້ ຕ້ອງແຈ້ງໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບພາຍໃນ ສາມສິບວັນ.

**ມາດຕາ 25 ການຍົກຍ້າຍ ເຄື່ອງຈັກອຸດສາຫະກຳ**

ການຍົກຍ້າຍເຄື່ອງຈັກອຸດສາຫະກຳ ມີ 2 ຮູບແບບ ດັ່ງນີ້:

1. ຍົກຍ້າຍຖາວອນ ແມ່ນການຍົກຍ້າຍເຄື່ອງຈັກອຸດສາຫະກຳ ຈາກໂຮງງານໄປຕິດຕັ້ງຢູ່ສະຖານທີ່ການຜະລິດໃໝ່ ແບບຖາວອນ ຊຶ່ງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳ ຕ້ອງແຈ້ງລາຍການ ແລະ ຈຳນວນເຄື່ອງຈັກອຸດສາຫະກຳ ໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອຂໍອະນຸຍາດ.

2. ຍົກຍ້າຍຊົ່ວຄາວ ແມ່ນການຍົກຍ້າຍເຄື່ອງຈັກອຸດສາຫະກຳ ຈາກໂຮງງານໄປຕິດຕັ້ງຢູ່ສະຖານທີ່ການຜະລິດໃໝ່ ບໍ່ເກີນ ຮ້ອຍແປດສິບວັນ ນັບແຕ່ວັນເລີ່ມຍົກຍ້າຍໄປສະຖານທີ່ໃໝ່ ຊຶ່ງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳ ຕ້ອງແຈ້ງລາຍການ, ຈຳນວນເຄື່ອງຈັກອຸດສາຫະກຳ ແລະ ໄລຍະເວລາໃນການເຄື່ອນຍ້າຍຊົ່ວຄາວໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອຊາບ, ພາຍຫຼັງຄົບກຳນົດເວລາຕ້ອງຍົກຍ້າຍກັບມາສະຖານທີ່ເກົ່າ ແລະ ຕ້ອງລາຍງານຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອຊາບ.

ກໍລະນີ ການຍົກຍ້າຍເຄື່ອງຈັກອຸດສາຫະກຳ ຫາກເກີນກຳນົດ ຮ້ອຍແປດສິບວັນ ວັນ ຖືເປັນການຍົກຍ້າຍຖາວອນ ຕ້ອງລາຍງານຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອຂໍອະນຸຍາດ.

ການນຳເຄື່ອງຈັກອຸດສາຫະກຳ ຈາກໂຮງງານໄປສ້ອມແປງ ຢູ່ພາຍໃນ ຫຼື ຕ່າງປະເທດ ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳ ຕ້ອງແຈ້ງລາຍການ, ຈຳນວນເຄື່ອງຈັກອຸດສາຫະກຳ, ສະຖານທີ່ ແລະ ໄລຍະເວລາໃນການສ້ອມແປງ ໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອຊາບ.

## ໝວດທີ 4
## ສິດ ແລະ ພັນທະເຈົ້າຂອງທະບຽນເຄື່ອງຈັກອຸດສາຫະກຳ

**ມາດຕາ 26 ສິດ ເຈົ້າຂອງທະບຽນເຄື່ອງຈັກອຸດສາຫະກຳ**

ສິດເຈົ້າຂອງທະບຽນເຄື່ອງຈັກອຸດສາຫະກຳ ມີສິດດັ່ງນີ້:

1. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ ແລະ ລະບຽບການ;

2. ໄດ້ຮັບບຸລິມະສິດໃນການເຂົ້າເຖິງນະໂຍບາຍສົ່ງເສີມອຸດສາຫະກຳຂອງລັດຖະບານ ເປັນຕົ້ນນະໂຍບາຍການເຂົ້າຫາແຫຼ່ງທຶນ, ນະໂຍບາຍສິນເຊື່ອ, ນະໂຍບາຍດ້ານພາສີ-ອາກອນ ແລະ ນະໂຍບາຍໂຄງການສົ່ງເສີມອື່ນໆ;

3. ໄດ້ຮັບການສົ່ງເສີມ, ການຊ່ວຍເຫຼືອ, ການແນະນຳຈາກພາກລັດ ແລະ ພາກສ່ວນອື່ນ ທາງດ້ານວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບເຄື່ອງຈັກອຸດສາຫະກຳ;

4. ໄດ້ຮັບຂໍ້ມູນຂ່າວສານກ່ຽວກັບເຄື່ອງຈັກອຸດສາຫະກຳ;

5. ໃຫ້ເຊົ່າ, ເຊົ່າຊື້, ໂອນ ຫຼື ຂາຍ ໃຫ້ບຸກຄົນ ຫຼື ນິຕິບຸກຄົນໄດ້;

6. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 27 ພັນທະເຈົ້າຂອງທະບຽນເຄື່ອງຈັກອຸດສາຫະກຳ**

ເຈົ້າຂອງທະບຽນເຄື່ອງຈັກອຸດສາຫະກຳ ມີພັນທະດັ່ງນີ້:

1. ສ້າງຕັ້ງໜ່ວຍງານຄຸ້ມຄອງ ແລະ ບຳລຸງຮັກສາ ເຄື່ອງຈັກອຸດສາຫະກຳ ປະຈຳປີ;

2. ສະໜອງຂໍ້ມູນ ແລະ ຂຶ້ນບັນຊີກ່ຽວກັບເຄື່ອງຈັກອຸດສາຫະກຳ ທີ່ມີໄດ້ຂຶ້ນທະບຽນແລ້ວ ແລະ ບໍ່ໄດ້ຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ;

3. ເສຍພາສີ, ອາກອນ ແລະ ປະຕິບັດພັນທະອື່ນ ໃຫ້ແກ່ລັດຕາມກົດໝາຍ ແລະ ລະບຽບການ;

4. ສະຫຼຸບລາຍງານຂໍ້ມູນກ່ຽວກັບເຄື່ອງຈັກອຸດສາຫະກຳ ໃຫ້ຖືກຕ້ອງ ແລະ ຊັດເຈນ ຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ຢ່າງເປັນປົກກະຕິ;

5. ຄວາມຮັບຜິດຊອບຕໍ່ຄ່າໃຊ້ຈ່າຍໃນການຂໍຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ;

6. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການຈັດຕັ້ງປະຕິບັດວຽກງານຕາມສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ລັດ;

7. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 28 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ມີດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງ, ໃຊ້ຄວາມຮຸນແຮງ, ບັງຂັບນາບຂູ່, ໝິ່ນປະໝາດການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
2. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບການຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ;
3. ປິດບັງຂໍ້ມູນຄວາມຈິງ ຫຼື ບໍ່ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 29 ຂໍ້ຫ້າມສຳລັບໂຮງງານ ແລະ ຜູ້ໄດ້ຮັບກຳມະສິດໃບທະບຽນເຄື່ອງຈັກອຸດສາຫະກຳ

ຫ້າມໂຮງງານ ແລະ ຜູ້ໄດ້ຮັບກຳມະສິດໃບທະບຽນເຄື່ອງຈັກອຸດສາຫະກຳ ມີພຶດຕິກຳ ດັ່ງນີ້:

1. ນຳເຂົ້າເຄື່ອງຈັກອຸດສາຫະກຳ ໂດຍທີ່ບໍ່ໄດ້ຮັບການຮັບຮອງແຜນການເຄື່ອນໄຫວປະຈຳປີ;
2. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ, ນຳໃບທະບຽນເຄື່ອງຈັກອຸດສາຫະກຳ ໃຫ້ຜູ້ອື່ນນຳໃຊ້;
3. ໃຫ້ຂໍ້ມູນກ່ຽວກັບເຄື່ອງຈັກອຸດສາຫະກຳ ແລະ ການຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ ບໍ່ຖືກກັບຄວາມເປັນຈິງ;
4. ເຄື່ອນຍ້າຍເຄື່ອງຈັກອຸດສາຫະກຳ ຫຼື ປ່ຽນແປງລາຍການເຄື່ອງຈັກອຸດສາຫະກຳ ໂດຍບໍ່ໄດ້ຮັບອະນຸຍາດ;
5. ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ.

### ມາດຕາ 30 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່

ຂໍ້ຫ້າມ ພະນັກງານ ຫຼື ເຈົ້າໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດ ສ່ວນຕົວ, ຍາດພີ່ນ້ອງ ແລະ ພັກພວກ ຂອງຕົນ;
2. ກົດໜ່ວງ, ຖ່ວງດຶງ ຫຼື ແກ່ຍາວເວລາ ໃນການພິຈາລະນາເອກະສານ;
3. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ, ເພີຍແຜ່ຄວາມລັບຂອງລັດ, ຄວາມລັບທາງລັດຖະການ ຫຼື ທຳລາຍເອກະສານ;
4. ອອກໃບຢັ້ງຢືນຈົດທະບຽນເຄື່ອງຈັກອຸດສາຫະກຳ ໂດຍບໍ່ຖືກຕ້ອງຕາມລະບຽບການ;
5. ຮຽກເອົາ, ທວງເອົາ ຫຼື ຮັບເອົາ ສິນບົນ;
6. ເປັນນາຍໜ້າ, ທີ່ປຶກສາ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບການຢັ້ງຢືນຈົດທະບຽນເຄື່ອງຈັກອຸດສາຫະກຳ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

# ໝວດທີ 6
# ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຄື່ອງຈັກອຸດສາຫະກຳ

**ມາດຕາ 31 ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຄື່ອງຈັກອຸດສາຫະກຳ**

ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຄື່ອງຈັກອຸດສາຫະກຳ ແບ່ງອອກເປັນ 3 ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມອຸດສາຫະກຳປຸງແຕ່ງ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງກົມອຸດສາຫະກຳປຸງແຕ່ງ**

ກົມອຸດສາຫະກຳປຸງແຕ່ງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບການຄຸ້ມຄອງວຽກງານເຄື່ອງຈັກອຸດສາຫະກຳ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;
2. ເຜີຍແຜ່ຂໍ້ຕົກລົງ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງເຄື່ອງຈັກອຸດສາຫະກຳ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງໃນຂອບເຂດທົ່ວປະເທດ;
3. ພິຈາລະນາອະນຸຍາດ ອອກ, ປ່ຽນແປງເນື້ອໃນ, ໂຈະ ແລະ ຍົກເລີກ ໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ , ການຍົກຍ້າຍ ແລະ ການປະເມີນລາຄາເຄື່ອງຈັກອຸດສາຫະກຳ ໂຮງງານຂະໜາດໃຫຍ່ ຕາມການແບ່ງຂັ້ນຄຸ້ມຄອງ;
4. ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຊຸກຍູ້, ຕິດຕາມ ກວດກາການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຄື່ອງຈັກອຸດສາຫະກຳ ໃນຂອບເຂດທົ່ວປະເທດ;
5. ສະຫຼຸບລາຍງານການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຄື່ອງຈັກອຸດສາຫະກຳ ໃຫ້ຂັ້ນເທິງຊາບເປັນແຕ່ລະໄລຍະ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ຂໍ້ຕົກລົງ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງເຄື່ອງຈັກອຸດສາຫະກຳ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ພາຍໃນແຂວງຂອງຕົນ;
2. ພິຈາລະນາອະນຸຍາດ ອອກ, ປ່ຽນແປງເນື້ອໃນ, ໂຈະ ແລະ ຍົກເລີກ ໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ , ການຍົກຍ້າຍເຄື່ອງຈັກອຸດສາຫະກຳ ແລະ ການປະເມີນລາຄາເຄື່ອງຈັກອຸດສາຫະກຳ ໂຮງງານຂະໜາດກາງຕາມການແບ່ງຂັ້ນຄຸ້ມຄອງ;
3. ປະສານສົມທົບກັບ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຊຸກຍູ້, ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຂຶ້ນທະບຽນເຄື່ອງຈັກອຸດສາຫະກຳພາຍໃນແຂວງຂອງຕົນ;
4. ສະຫຼຸບລາຍງານການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຄື່ອງຈັກອຸດສາຫະກຳ ໃຫ້ກົມອຸດສາຫະກຳປຸງແຕ່ງຊາບ ເປັນແຕ່ລະໄລຍະ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 34 ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ຂໍ້ຕົກລົງ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງເຄື່ອງຈັກອຸດສາຫະກຳ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ພາຍໃນເມືອງ, ນະຄອນ;

2. ພິຈາລະນາອະນຸຍາດ ອອກ, ປ່ຽນແປງເນື້ອໃນ, ໂຈະ ແລະ ຍົກເລີກ ໃບຢັ້ງຢືນຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ , ການຍົກຍ້າຍເຄື່ອງຈັກອຸດສາຫະກຳ ແລະ ການປະເມີນລາຄາເຄື່ອງຈັກອຸດສາຫະກຳ ໂຮງງານຂະໜາດນ້ອຍ ຕາມການແບ່ງຂັ້ນຄຸ້ມຄອງ;

3. ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຊຸກຍູ້, ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຄື່ອງຈັກອຸດສາຫະກຳ ພາຍໃນເມືອງ, ນະຄອນ;

4. ສະຫຼຸບລາຍງານການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານເຄື່ອງຈັກອຸດສາຫະກຳ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງຊາບ ເປັນແຕ່ລະໄລຍະ;

5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 35 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳປຸງແຕ່ງ ເປັນເຈົ້າການປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 36 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າວັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ບັນດາໂຮງງານອຸດສາຫະກຳປຸງແຕ່ງ ທີ່ໄດ້ຮັບອະນຸຍາດດຳເນີນກິດຈະການໂຮງງານ ກ່ອນຂໍ້ຕົກລົງສະບັບນີ້ ໃຫ້ມາສະເໜີຂໍຂຶ້ນທະບຽນເຄື່ອງຈັກອຸດສາຫະກຳ.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ